# ການພັດທະນາການຮັບຮອງ ແລະ ຍັ້ງຢືນກະສິກຳສະອາດ

# (ກະສິກຳອິນຊີ OA ແລະ ກະສິກຳທີ່ດີ GAP)

ໂດຍ: ທ. ວຽງສະໄຫວ ແສງສຸຣິວົງສ໌

ຫົວໜ້າພະແນກ ມາດຕະຖານ,

ກົມປູກຝັງ

ກອງປະຊຸມກະສິກຳອິນຊີລາວ ຄັ້ງທີ 6(LOAF) 14/12/ 2017, ທີ່ໂຮງແຮມ ຄຣາວພ ລາຊາ,

ນະຄອນຫລວງວຽງຈັນ

# ຫົວຂໍ້ຈະນຳສະເໜີ

ການພັດທະນາມາດຕະຖານ ແລະ ລະບົບການຍັ້ງຢືນ ໃນ ສປປ ລາວ.

- ວິໄສທັດກະສິກຳສະອາດ
- ນິຍາມກະສິກຳສະອາດ( ກະສິກຳອິນຊີ ແລະ ກະສິກຳທີ່ດີ)
- ພາກພື້ນ ແລະ ສາກົນ
- ການພັດທະນາກະສິກຳອິນຊີ (OA).
- ການພັດທະນາກະສິກຳທີ່ດີ (GAP).

II. ລະບົບການຍັ້ງຢືນ ສປປ ລາວ

- ຄວາມໝາຍ ແລະ ຄວາມສຳຄັນຂອງມາດຕະຖານ ແລະ ລະບົບການຍັ້ງຢືນ

# ວິໄສທັດກະສິກຳສະອາດ
# ເປັນກົນໄກໃນການຂັບເຄື່ອນການຂະຫຍາຍໂຕເສດຖະກິດ, ຍູ້ໜູນການເຊື່ອມໂຍງສາກົນ ແລະ ປົກປ້ອງສິ່ງແວດລ້ອມ

- **<u>ຈຸດປະສົງ:</u>**
  - ປັບປຸງຄຸນນະພາບ ແລະ ຄວາມປອດໄພຜົນຜະລິດກະສິກຳ
  - ຍົກລະດັບການເຂົ້າເຖິງຕະຫຼາດ













# ນິຍາມກະສິກຳສະອາດ

**ກະສິກຳສະອາດ**: ໝາຍເຖິງ ລະບົບການຜະລິດກະສິກຳ ທີ່ເຮັດໃຫ້ໄດ້ຜົນຜະລິດສະອາດ ປອດໄພ ແລະ ເປັນມິດກັບສິ່ງແວດລ້ອມ ຊຶ່ງເປັນລະບົບການຜະລິດທີ່ມີມາດຕະຖານ ແລະ ມີລະບົບການຍັ່ງຍືນ ພ້ອມດ້ວຍກຳນົດໝາຍຜະລິດຕະພັນ.

| | |
|---|---|
| ກະສິກຳທີ່ດີ GAP = Good Agriculture Practice | ສາມາດນຳໃຊ້ສານເຄມີໄດ້ແຕ່ຕ້ອງຢູ່ ໃນຂອບເຂດທີ່ກຳນົດໄວ້ |
| ກະສິກຳອິນຊີ OA= Organic agriculture | ຫ້າມນຳໃຊ້ສານເຄມີສັງເຄາະທຸກປະເພດ |
| ກະສິກຳປອດຢາປາບສັດຕູພືດ PFP = Pesticide- free production | ບໍ່ອະນຸຍາດນຳໃຊ້ຢາຂ້າແມງໄມ້ ຈາກເຄມີສັງເຄາະທຸກປະເພດ |
| ກະສິກຳທຳມະຊາດ Traditional agriculture | ບໍ່ໄດ້ນຳໃຊ້ສານເຄມີ<br>ນຳໃຊ້ຝຸ່ນຄອກຝຸ່ນບົ່ມ |

- **ກະສິກຳອິນຊີ (Organic Agriculture)**

ກະສິກຳອິນຊີ ເປັນລະບົບການຜະລິດລິດທີ່ເນັ້ນໃສ່ການຮັກສາຄວາມອຸດົມສົມບູນຂອງດິນ, ລະບົບນິເວດ, ຄົນ, ສັດ ແລະສິ່ງແວດລ້ອມ



- # ນິຍາມກະສິກຳທີ່ດີ

**Good Agriculture Practice (GAP)**

- ກະສິກຳທີ່ດີ ເປັນລະບົບການຜະລິດລິດທີ່ເນັ້ນໃສ່ການຫລຸດຜ່ອນການນໍາໃຊ້ເຄມີສັງເຄາະ ແນ່ໃສ່ຮັບປະກັນ ຄຸນນະພາບ ຄວາມປອດໄພ ສະຫວັດ ດີການສັງຄົມ ຂອງ ຜູ້ຜະລິດ ແລະ ຮັກສາສິ່ງແວດລ້ອມ.




ຄວາມປອດ
ໄພຂອງອາຫານ
ເລີ່ມຕົ້ນຢູ່ທີ່ຟາມ

# 2. ພາກພື້ນ (ASEAN GAP, ASEAN OA)

- ຈາກທ້າຍປີ 2015 ເປັນຕົ້ນໄປ, ສະມາຄົມເສດຖະກິດອາຊຽນ (AEC) ຈະຖືກຈັດຕັ້ງປະຕິບັດ. ໜຶ່ງໃນບັນດາຄາດໝາຍຂອງ (AEC) ຄືການສ້າງຕັ້ງເປັນຕະຫຼາດຮ່ວມສໍາລັບສິນຄ້າ ແລະ ຜະລິດຕະພັນກະສິກໍາ. ຈຶ່ງໄດ້ຮຽກຮ້ອງໃຫ້ສ້າງມາດຕະຖານກະສິກໍາທີ່ດີ (GAP), ມາດຕະຖານລ້ຽງສັດທີ່ດີ (GAHP), ມາດຕະຖານສຸຂານາໄມ (GHP), ມາດຕະຖານການປຸງແຕ່ງທີ່ດີ (GMP) ແລະ ມາດຕະຖານການວິເຄາະຈຸດຄວບຄຸມທີ່ອາດເກີດມີຄວາມສ່ຽງ (HACCP), ເປັນມາດຕະຖານສໍາລັບຄວບຄຸມຜະລິດຕະພັນກະສິກໍາທີ່ເປັນອາຫານ ທີ່ມີທ່າແຮງທາງດ້ານການຄ້າ. ຈຶ່ງຄາດວ່າໃນອານາຄົດ, ການຍັ້ງຢືນກະສິກໍາທີ່ດີຈະກາຍເປັນເຄື່ອງມືທີ່ຈໍາເປັນສໍາລັບຄ້າຂາຍຜົນຜະລິດກະສິກໍາຢູ່ພາຍໃນອາຊຽນ. ບັນດາປະເທດສະມາຊິກອາຊຽນຕ້ອງໄດ້ສ້າງມາດຕະຖານກະສິກໍາທີ່ດີແຫ່ງຊາດ ຂອງຕົນເອງຂຶ້ນມາ, ຈຶ່ງລວມເຖິງ ສປປ ລາວ. ບັນດາຂໍ້ກໍານົດທີ່ລະບຸໄວ້ໃນບາງໝວດຂອງມາດຕະຖານກະສິກໍາທີ່ດີອາຊຽນຈະຕ້ອງໄດ້ຖືກຈັດຕັ້ງປະຕິບັດ ແລະ ມີການຍອມຮັບເຊິ່ງກັນ

# ການພັດທະນາກະສິກຳອິນຊີ

- ໃນໄລຍະຜ່ານກະສິກຳອິນຊີໄດ້ມີບົດບາດອັນສຳຄັນຕໍ່ເປົ້າໝາຍການພັດທະນາກະສິກຳ ທີ່ຍືນຍົງ ເຊິ່ງໃນທົ່ວໂລກໄດ້ ມີອັດຕາເພີ່ມຂຶ້ນສະເລ່ຍ 20% ນັບແຕ່ປີ 2002 ເປັນຕົ້ນມາ.
- ໃນປີ 2006 ການພັດທະນາກະສິກຳອິນຊີ ໄດ້ຂະຫຍາຍກວມເອົາ 110 ປະເທດ ເຊິ່ງມີພື້ນທີ່ການຜະລິດ ທັງໝົດ 319,6 ລ້ານເຮັກຕາ, ແລະ ຈາກການສຶກສາຂອງສະຫະພັນກະສິກຳອິນຊີຂອງໂລກພົບວ່າຈະມີແນວໂນ້ມຂະຫຍາຍຕົວ 10-15% ຕໍ່ປີ ໃນຊຸມປີຕໍ່ໜ້າ.

# ການພັດທະນາກະສິກຳອິນຊີ

- ຢູ່ ສປປ ລາວ, ເລີ່ມແຕ່ປີ 2004 ເປັນຕົ້ນມາກະສິກຳອິນຊີ ໄດ້ພັດທະນາຈາກກະສິກຳແບບທຳມະຊາດ ເຂົ້າສູ່ລະບົບການຜະລິດ ທີ່ມີມາດຕະຖານ ແລະ ມີລະບົບການຢັ້ງຢືນຕາມມາດຕະຖານທີ່ເຊື່ອມໂຍງ ພາກພື້ນ ແລະ ສາກົນ.
-

# ການຈັດຕັ້ງປະຕິບັດ ກະສິກຳອິນຊີ ໃນໄລຍະຜ່ານມາ

ການຜະລິດກະສິກຳອິນຊີ ໄດ້ເລີ່ມມາແຕ່ປີ 2013 ເປັນຕົ້ນມາ, ເຊິ່ງໃນນັ້ນ ໄດ້ເລີ່ມຈາກການພັດທະນາມາດຕະຖານ ກະສິກຳອິນຊີ ຂອງລາວຈາກ ມາດຕະຖານສະຫະພັນກະສິກຳອິນຊີສາກົນ (IFOAM), ຈາກນັ້ນໄດ້ພັດທະນຳສຳລັບ ຜູ້ຜະລິດ-ຜູ້ປະກອບການ, ພັດທະນາລະບົບການຄວບຄຸມພາຍໃນ, ຄູ່ມືນັກກວດກາ ແລະ ຄູ່ມືການຂໍການຢັ້ງຢືນ ພ້ອມດຽວກັນນັ້ນ ໄດ້ພັດທະນາອົງກອນຂອງລັດ ເພື່ອການຮັບຮອງ ແລະ ຢັ້ງຢືນກະສິກຳອິນຊີໃນ ສປປ ລາວ.

# ການພັດທະນາກະສິກຳທີ່ດີ

- ການຜະລິດກະສິກຳທີ່ດີ ແມ່ນລະບົບການຜະລິດອີກທາງເລືອກໜຶ່ງ

ຊຶ່ງເໝາະສົມສຳລັບ ການຜະລິດເປັນສິນຄ້າ ໃນພື້ນທີ່ຂະໜາດໃຫຍ່, ເຊິ່ງມີຄວາມຈຳເປັນຕ້ອງນຳໃຊ້ ຝຸ່ນເຄມີ ແລະ ຢາປາບສັດຕູພືດເຄມີ, ການຜະລິດພືດໃນລະບົບນີ້ຖືວ່າມີບົດບາດສຳຄັນ ແລະ ກຳລັງເປັນທີ່ຍອມຮັບຂອງສາກົນອີກລະບົບໜຶ່ງ. ໃນສົນທິສັນຍາສາກົນ ຂອງອົງການການຄ້າໂລກ ແລະ ກອບພັດທະນາອາຊຽນ ໄດ້ກຳນົດວ່າ: ການຄ້າຂາຍສິນຄ້າກະສິກຳ ຢ່າງຕຳ່ສຸດຈະຕ້ອງໄດ້ຮັບການຢັ້ງຢືນ ໃນລະບົບມາດຕະຖານກະສິກຳທີ່ດີ (GAP).

- ຄວາມສຳຄັນຂອງມາດຕະຖານກະສິກຳທີ່ດີ ແລະ ສິນຄ້າກະສິກຳທີ່ດີ







ເປັນລະບົບການຜະລິດທີ່ ມີດີ

ຢ່າງ:

# ການພັດທະນາກະສິກຳທີ່ດີ

- ກະສິກຳທີ່ດີ (GAP) ໄດ້ເລີ່ມພັດທະນາຂຶ້ນໃນ ສປປ ລາວ ນັບແຕ່ປີ 2012 ເປັນຕົ້ນມາ ເຊິ່ງໄດ້ດັດປັບມາດຕະຖານກະສິກຳທີ່ດີ ຂອງອາຊຽນ ມາຮັບໃຊ້ເປັນມາດຕະຖານຂອງລາວ ຊຶ່ງໄດ້ອອກຂໍ້ຕົກລົງຂອງ ລັດຖະ ມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ທັງໝົດມີ 4 ໝວດ ມາດຕະຖານ ຄື: 1). ໝວດຄວາມປອດໄພຂອງຜົນຜະລິດ,

 2). ໝວດການຈັດການດ້ານສິ່ງແວດລ້ອມ

 3). ໝວດຄຸນນະພາບຂອງຜົນຜະລິດ ແລະ 4). ໝວດສຸຂະພາບຂອງຜູ້ອອກແຮງງານ. ແຕ່ໃນປະຈຸບັນ ບັນດາປະເທດອາຊຽນ ໄດ້ຕົກລົງ ລິເລີ່ມປະຕິບັດ ໝວດມາດຕະຖານ ຄວາມປອດໄພຂອງຜົນຜະລິດ ເປັນການເລີ່ມຕົ້ນໄປກ່ອນ ສ່ວນທີ່ເຫຼືອ ອີກ 3 ໝວດ ມາດຕະຖານ ຈະໄດ້ພ້ອມກັນກຳນົດປະຕິບັດໃນຕໍ່ໜ້າ.

# ຄວາມໝາຍ ແລະ ຄວາມສຳຄັນ ຂອງມາດຕະຖານ ແລະ ລະບົບການຢັ້ງຢືນ

- ມາດຕະຖານແມ່ນຫຍັງ?
  - ແມ່ນຂໍ້ກຳນົດ ແລະ ເງື່ອນໄຂ ທີ່ສ້າງຂຶ້ນມາເພື່ອເປັນກອບໃຫ້ແກ່ ຜູ້ຜະລິດ, ຜູ້ປຸງແຕ່ງ ແລະ ຜູ້ປະກອບການ ປະຕິບັດຕາມ.

- ເປັນຫຍັງຕ້ອງຜະລິດຕາມມາດຕະຖານ?
  - ການຜະລິດມີການນຳໃຊ້ສານເຄມີເກືອບຂອບເຂດ, ສານເຄມີກໍາຄ້າງ, ການປົນເປື້ອນຈຸລິນຊີ ແລະ ເຊື້ອພະຍາດ, ຜົນກະທົບຕໍ່ສິ່ງແວດລ້ອມ...

# ຄວາມໝາຍ ແລະ ຄວາມສຳຄັນ ຂອງມາດຕະຖານ ແລະ ລະບົບການຢັ້ງຢືນ

- ລະບົບການຢັ້ງຢືນແມ່ນຫຍັງ?
  - ການລະບົບການຮັບປະກັນຄຸນນະພາບ ວ່າຜົນຜະລິດ ແລະ ຜະລິດຕະພັນນັ້ນໆໄດ້ຜະລິດ, ປຸງແຕ່ງ ແລະ ມີການຈັດການ ສອດຄ່ອງກັບ ຂໍ້ກຳນົດ ແລະ ເງື່ອນໄຂທີ່ກຳນົດໄວ້ ໃນມາດຕະຖານຫຼືບໍ່.
- ເປັນຫຍັງຈຶ່ງຕ້ອງມີການຢັ້ງຢືນ?
  - ຜູ້ຜະລິດ ແລະ ຜູ້ບໍລິໂພກ -ບໍ່ຢູ່ໃກ້ກັນ ແລະ ຂາດຄວາມເຊື່ອໝັ້ນຊຶ່ງກັນ ແລະ ກັນ,,ຜູ້ບໍລິໂພກ ຕ້ອງການໃຫ້ມີການຢັ້ງຢືນ ເພື່ອຮັບປະກັນວ່າ ສິ່ງທີ່ພວກເຂົາບໍລິໂພກນັ້ນ ໄດ້ຜະລິດ ແລະ ປຸງແຕ່ງ ຕາມມາດຕະຖານ ແລະ ຂໍ້ກຳນົດ.



ຄວາມຮຽກຮ້ອງຕ້ອງການ
ຈາກຜູ້ຂາຍຍ່ອຍ
ລັດຖະບານ
ຜົນຜະລິດປອດໄພ
ຄຸນນະພາບຖືກຕ້ອງ
ບໍ່ທຳລາຍສິ່ງແວດລ້ອມ
ຜູ້ຜະລິດໄດ້ຮັບການປົກປ້ອງ
Internal-External Markets
WTO
AEC
ເຂດການຄ້າເສລີອາຊຽນ
ປີ 2015
Southeast Asia Map
LAOS
THAILAND
MYANMAR
VIET NAM
CAMBODIA
PHILIPPINES
MALAYSIA
BRUNEI DARUSSALAM
SINGAPORE
INDONESIA
AFTA
ເປັນຫຍັງ
ຈຶ່ງຜະລິດ
ຕາມມາດ
ຕະຖານ?
Corporate
Social
Responsibility
Standard Requirements for trading
TBT

# ຂໍ້ກຳນົດ ແລະ ເງື່ອນໄຂ ມາດຕະຖານ ແລະ ການຢັ້ງຢືນຂອງພາກພື້ນ ແລະ ສາກົນ

- **ສະພາບການພັດທະນາມາດຕະຖານຂອງອາຊຽນ**
  - ມາດຕະຖານກະສິກຳທີ່ດີອາຊຽນ (ASEAN GAP), ຮັບຮອງໂດຍ SOM-AMAF ປີ 2005
  - ມາດຕະຖານກະສິກຳອິນຊີອາຊຽນ (ASEAN OA), ຮັບຮອງໂດຍ SOM-AMAF ປີ 2012.
  - ອາຊຽນໄດ້ຮຽກຮ້ອງ ໃຫ້ທຸກປະເທດສະມາຊິກ ຕ້ອງມີມາດຕະຖານ (GAP, OA)
  - ການສ້າງມາດຕະຖານຂອງແຕ່ລະປະເທດ ຕ້ອງໃຫ້ເທົ່າທຽມ ກັບ ມາດຕະຖານ ອາຊຽນ. (ຄາດໝາຍໃຫ້ສຳເລັດ ໃນປີ 2018)
- **ສະພາບການພັດທະນາລະບົບການຢັ້ງຢືນ**
  - ອາຊຽນກຳລັງຢູ່ໃນຊ່ວງຮ່າງຄູ່ມືລະບົບການຢັ້ງຢືນກະສິກຳອິນຊີ (ASEAN Guideline for Organic Certification-AGOC). ສຳເລັດໃນປີ 2018

# ຂໍ້ກຳນົດ ແລະ ເງື່ອນໄຂ ມາດຕະຖານ ແລະ ການຢັ້ງຢືນຂອງພາກພື້ນ ແລະ ສາກົນ

- **ການກວດກາ ແລະ ການຢັ້ງຢືນ (Certification Body-CB)-ISO 17065**
  - ການສ້າງຂໍ້ຕົກລົງການຮັບຮູ້ ແລະ ຍອມຮັບເຊິ່ງກັນ ແລະ ກັນ ໃນດ້ານມາດຕະຖານ ແລະ ການຢັ້ງຢືນ (Mutual Recognition Agreement-MRA).
    - ຂໍ້ກຳນົດໃນ MRA ປະກອບມີ
      - ມາດຕະຖານຂອງແຕ່ລະປະເທດຕ້ອງເທົ່າທຽມກັບມາດຕະຖານອາຊຽນ
      - ລະບົບການຢັ້ງຢືນ (ໜ່ວຍງານຢັ້ງຢືນຂອງລັດ ຢ່າງໜ້ອຍ ຕ້ອງປະຕິບັດຕາມຫຼັກການ ISO 17065), ໜ່ວຍງານຢັ້ງຢືນຂອງເອກະຊົນ ຕ້ອງໄດ້ຮັບຮອງຕາມມາດຕະຖານສາກົນ ISO 17065)
- **ໜ່ວຍງານ ຮັບຮອງ (Accreditation Body-AB)-ISO 17011**
- **ຫ້ອງວິໄຈ: ISO 17025**

# ການພັດທະນາອົງກອນ

- ການພັດທະນາອົງກອນ (ພະແນກມາດຕະຖານ ແລະ ສູນພັດມາດຕະຖານກະສິກຳສະອາດ.
    - ສູນມາດຕະຖານກະສິກຳສະອາດ ເຮັດໜ້າທີ່ໃນການສົ່ງເສີມເຕັກນິກກະສິກຳສະອາດ
    - ພະແນກມາດຕະຖານ ເຮັດໜ້າທີ່ໃນການພັດທະນາມາດຕະຖານ, ການ



# ການພັດທະນາ ມາດຕະຖານ ແລະ ນິຕິກຳ ກ່ຽວກັບ ກະສິກຳອິນຊີ









ກະສິກຳ ອິນຊີລາວ

Laos Organic

CERTIFIED









- ຄວາມສຳຄັນຂອງມາດຕະຖານກະສິກຳທີ່ດີ ແລະ ສິນຄ້າກະສິກຳທີ່ດີ







ເປັນລະບົບການຜະລິດທີ່ ມີດີ

ຢ່າງ:

# ບັນດາມາດຕະຖານ GAP ແລະ ຄູ່ມືການຈັດຕັ້ງປະຕິບັດ

ມາດຕະຖານກະສິກຳທີ່ດີຂອງ ສປປ ລາວ ແມ່ນມາດຕະຖານສະມັກໃຈສຳລັບການປະຕິບັດກະສິກຳທີ່ດີຕັ້ງແຕ່ຂອດ ຜະລິດ, ເກັບກ່ຽວ ແລະ ການຈັດການຫຼັງການເກັບກ່ຽວຜັກ ແລະ ໝາກໄມ້ສົດຢູ່ໃນ ສປປ ລາວ ມາດຕະຖານກະສິກຳທີ່ດີຂອງ ສປປ ລາວໄດ້ ພັດທະນາມາຈາກມາດຕະຖານກະສິກຳທີ່ດີຂອງອາຊຽນປະກອບມີ 4 ໝວດ

## ໝວດ

### ຄວາມປອດໄພ






### ຄຸນນະພາບ






### ການຈັດການສິ່ງແວດລ້ອມ






### ສະຫວັດດີການຂອງຜູ້ອອກແຮງງານ







## ພາບໝາຍ GAP

ກະຊວງກະສິກຳ ແລະ ປ່າໄມ້
ກະສິກຳທີ່ດີລາວ
LAO GAP
ກົມປູກຝັງ

# ການພັດທະນາຄູ່ມືແນະນຳການປະຕິບັດມາດຕະຖານກະສິກຳທີ່ດີ












# ມາດຕະຖານສະເພາະພືດ

ຮ່າງ












# ມາດຕະຖານສະເພາະພືດ

ຮ່າງ









# • ການຈັດຕັ້ງປະຕິບັດໃນໄລຍະຜ່ານມາ

## ການພັດທະນາອົງກອນຢັ້ງຢືນຕາມມາດຕະຖານສາກົນ ISO/IEC 17065





- ນັກກວດກາ ຢູ່ໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໄດ້ຈຳນວນ 15 ຄົນ,
- ທີ່ປຶກສາຟາມ ຈຳນວນ 250 ຄົນ,
- ຄະກຳມະການຈຳນວນ 22 ຄົນ
- ພະນັກງານວິຊາການທີ່ເປັນຜູ້ກວດກາພາຍໃນ (ICS) 20 ຄົນ



ຂະບວນການ
ອອກໃບຢັ້ງຢືນກະສິກຳສະອາດ
certification process
ການສະໝັກ
Application
ລວມ 17ວັນ
ການກວດກາ
Inspection
ລວມ 45ວັນ
ການຢັ້ງຢືນ
Certification
ລວມ 20ວັນ
ການຕໍ່ອາຍຸ
Renewal
021 412350
021 412340

# ການຢັ້ງຢືນ OA ແລະ GAP




## ກະສິກຳອິນຊີ

- ຢັ້ງຢືນທັງໝົດ: 49 ຫົວໜ່ວຍ (ແບບດ່ຽວ 23 ແລະ ແບບກຸ່ມ 26 “ຊາວກະສິກອນ: 2,785 ຄອບຄົວ(155 ກຸ່ມຍ່ອຍ)”
- ເນື້ອທີ່: 3,327.16 ເຮັກຕາ ຜົນຜະລິດ: 7,729.78 ໂຕນ
- ກວມເອົາ 1 ນະຄອນຫຼວງວຽງຈັນ ແລະ 9 ແຂວງ.

## ກະສິກຳທີ່ດີ

- ຢັ້ງຢືນທັງໝົດ : 16 ຫົວໜ່ວຍ
- ຊາວກະສິກອນ : 200 ຄຄ
- ເນື້ອທີ່ : 1,094.76 ເຮັກຕາ
- ຜົນຜະລິດ : 4,955.69 ໂຕນ

# ບັນຫາ ແລະ ສິ່ງທ້າທາຍ

- ອົງກອນທີ່ເຮັດໜ້າທີ່ໃນການຮັບຮອງ, ກວດກາ ແລະ ຢັ້ງຢືນ ຍັງບໍ່ທັນພຽງພໍ ແລະ ຕອບສະໜອງໄດ້ ຕາມເງື່ອນໄຂຂອງພາກພື້ນ ແລະ ສາກົນ.
  - ອົງກອນຮັບຮອງ (ISO 17011), ຍັງບໍ່ທັນມີ.
  - ອົງກອນກວດກາ ແລະ ຢັ້ງຢືນ (ISO 17065) ຍັງບໍ່ທັນເຂັ້ມແຂງ
  - ຫ້ອງວິໄຈ (ISO 17025), ຍັງບໍ່ທັນມີ.
- ບຸກຄະລາກອນ (ຕັ້ງແຕ່ສູນກາງ ຈົນຮອດທ້ອງຖິ່ນ) ຍັງຂາດທັງປະລິມານ ແລະ ຄຸນນະພາບ.
- ຍັງຂາດ ຄວາມພ້ອມ ຂອງພາກຜູ້ປະກອບການ ແລະ ຊາວກະສິກອນໃນການເຂົ້າສູ່ລະບົບມາດຕະຖານ.
- ໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ (Logistic) ຍັງບໍ່ທັນໄດ້ມາດຕະຖານ ແລະ ພຽງພໍ.

# ຂໍ້ສະເໜີແນະ

- **ພາກອົງກອນ:**
  - ສ້າງຕັ້ງອົງກອນຮັບຮອງ (ISO 17011)- ປະຈຸບັນມີຢູ່ແລ້ວ ແມ່ນ ພະແນກມາດຕະຖານ, ຍົກລະດັບພະແນກມາດຕະຖານ ເຮັດໜ້າທີ່ເປັນ (Accreditation Body-AB)-ມີໜ້າທີ່ໃນການສ້າງມາດຕະຖານ ແລະ ລະບົບການຮັບຮອງໜ່ວຍງານຢັ້ງຢືນ, ຊຶ່ງຄາດວ່າ ໃນອານາຄົດ ອາດຈະມາໜ່ວຍງານຢັ້ງຢືນທີ່ເປັນຂອງພາກລັດ ແລະ ເອກະຊົນເກີດຂື້ນມາ.

  - ສ້າງອົງກອນກວດກາ ແລະ ຢັ້ງຢືນ (ISO 17065) - ສະເໜີສ້າງຂື້ນມາໃໝ່ ໂດຍແຍກກວງກວດກາ ແລະ ຢັ້ງຢືນ ອອກຈາກ ພະແນກມາດຕະຖານ, ແລ້ວສ້າງເປັນສູນສະເພາະຂື້ນມາ

# ຂໍ້ສະເໜີແນະ

- **ພາກອົງກອນ:**
  - ໃນອານາຄົດ ອາດສ້າງໜ່ວຍງານກວດກາ (Inspection Body) ຂຶ້ນ ຢູ່ໃນສາມພາກ (ພາກເໜືອ, ພາກກາງ ແລະ ພາກໃຕ້). ຫຼັງຈາກນັ້ນ, ຈຶ່ງກ້າວໄປສູ່ ການສ້າງໜ່ວຍງາຢັ້ງຢືນ (Certification Body-CB) ຢູ່ ສາມພາກ ໂດຍການຍົກລະດັບ ໜ່ວຍງານ IB ໃຫ້ກາຍເປັນ ໜ່ວຍງານ CB.
  - ສູນພັດທະນາ ແລະ ສົ່ງເສີມເຕັກນິກກະສິກຳສະອາດ-ມີຢູ່ແລ້ວ ສູນພັດທະນາກະສິກຳສະອາດ, ແຕ່ຕ້ອງໄດ້ສ້າງຄວາມເຂັ້ມແຂງ

# ຂໍ້ສະເໜີແນະ

- ການພັດທະນາຫ້ອງວິໄຈ:
  - ສ້າງຫ້ອງວິໄຈ ໃຫ້ໄດ້ມາດຕະຖານສາກົນ (ISO 17025)- ຢ່າງໜ້ອຍ ໃຫ້ມີ National Reference Lab ເກີດຂຶ້ນ ໃນລະດັບປະເທດ.
- ການພັດທະນາຊັບພະຍາກອນມະນຸດ
  - ສ້າງນັກກວດກາຂັ້ນສູນກາງ ແລະ ຂັ້ນແຂວງ
  - ສ້າງທີ່ປຶກສາຟາມ ຫຼື ພະນັກງານໃຫ້ຄຳປຶກສາ (Farm Advisors)-ລະດັບແຂວງ ແລະ ເມືອງ.
- ການພັດທະນາໂຄງລ່າງພື້ນຖານ ແລະ ເຄື່ອງມືສິ່ງອຳນວຍຄວາມສະດວກ
  - ເຄື່ອງມືກວດກາ ຢູ່ພາກສະໜາມ.

# ຂອບໃຈ

